ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 228 /ລບ

ນະຄອນຫລວງວຽງຈັນ, ວັນທີ 31.5.2012

# ດຳລັດ
# ວ່າດ້ວຍການກັນ ແລະ ຄວບຄຸມພະຍາດສັດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ ພະຈິກ 2012 ສະບັບເລກທີ 10/ລບ, ລົງວັນທີ 23/12/2011;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0765/ກປ ລົງວັນທີ 21 ພຶດສະພາ 2012.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ, ມາດຕະການ ແລະ ວິທີການກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ ເພື່ອສະກັດກັ້ນ, ຈຳກັດ ແລະ ກ້າວໄປສູ່ການລົບລ້າງພະຍາດລະບາດສັດ ແນໃສ່ບໍ່ໃຫ້ມີການລະບາດຢູ່ດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບປະກັນເຮັດໃຫ້ສັດລ້ຽງມີສຸຂະພາບແຂງແຮງ ໃຫ້ຜົນຜະລິດສູງ, ມີຄວາມປອດໄພຕໍ່ຜູ້ບໍລິໂພກ ລວມທັງບໍ່ສ້າງຄວາມເສຍຫາຍ ຕໍ່ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຂອງຊາດ.

**ມາດຕາ 2. ການກັນ ແລະ ຄວບຄຸມພະຍາດສັດ**

ການກັນພະຍາດສັດ ແມ່ນການນຳໃຊ້ວິທີການກັນພະຍາດ ໃນສະຖານທີ່ລ້ຽງສັດໃດໜຶ່ງ ເພື່ອກັນ ຫລື ຫລຸດຜ່ອນປັດໄຈສ່ຽງກ່ອນການເກີດພະຍາດສັດ ແນໃສ່ຮັບປະກັນບໍ່ໃຫ້ສັດເປັນພະຍາດ ທີ່ຈະສ້າງຄວາມເສຍຫາຍຕໍ່ການລ້ຽງສັດ ແລະ ຜູ້ບໍລິໂພກ.

ການຄວບຄຸມພະຍາດສັດ ແມ່ນການນຳໃຊ້ມາດຕະການຄວບຄຸມພະຍາດ ໃນສະຖານທີ່ລ້ຽງສັດ ຫລື ຂອບເຂດທີ່ກຳນົດຂຶ້ນໃດໜຶ່ງ ເພື່ອຈຳກັດ ແລະ ທຳລາຍພະຍາດສັດ ທີ່ເກີດຂຶ້ນແລ້ວ ໃຫ້ສະຫງົບ ແລະ ກັບຄືນສູ່ສະພາບປົກກະຕິ ລວມທັງການປິ່ນປົວ, ການນຳໃຊ້ມາດຕະການດ້ານບໍລິຫານ ແລະ ແຜນການຄວບຄຸມສຸກເສີນ ຫລື ແຜນການລົບລ້າງພະຍາດສັດໃດໜຶ່ງ ເພື່ອບໍ່ໃຫ້ມີ ຫລື ເກີດມີພະຍາດສັດ ໃນ ສປປ ລາວ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະຍາດສັດ** ໝາຍເຖິງ ການສະແດງອາການ ຫລື ຮ່ອງຮອຍ ຫລື ການເຮັດໜ້າທີ່ຂອງອະໄວຍະວະ, ພາກສ່ວນໃດໜຶ່ງ ຫລື ລະບົບໃດໜຶ່ງຂອງຮ່າງກາຍສັດຜິດປົກກະຕິ ຊຶ່ງປະກອບດ້ວຍ: ພະຍາດລະບາດສັດ ແລະ ພະຍາດສັດທີ່ບໍ່ລະບາດ;
2. **ພະຍາດລະບາດສັດ** ໝາຍເຖິງ ພະຍາດສັດທີ່ສາມາດຕິດຕໍ່ຈາກສັດສູ່ສັດ ແລະ ຈາກສັດສູ່ຄົນ ຕາມທີ່ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ;
3. **ພະຍາດສັດທີ່ບໍ່ລະບາດ** ໝາຍເຖິງ ພະຍາດທີ່ບໍ່ສາມາດຕິດຕໍ່ຈາກສັດສູ່ສັດ ແລະ ຈາກສັດສູ່ຄົນ;
4. **ສະຖານທີ່ລ້ຽງສັດ** ໝາຍເຖິງ ຄັງ, ຟາມ, ຄອກ ຫລື ສະຖານທີ່ອື່ນ ທີ່ນຳໃຊ້ສຳລັບລ້ຽງສັດ;
5. **ພາຫະນຳເຊື້ອພະຍາດ** ໝາຍເຖິງ ຄົນ, ສັດທີ່ມີກະດູກສັນຫລັງ, ສັດທີ່ບໍ່ມີກະດູກສັນຫລັງ, ພາຫະນະ ຂົນສົ່ງ ແລະ ວັດຖຸຕ່າງໆ ທີ່ສາມາດນຳເຊື້ອພະຍາດ;
6. **ສັດທີ່ສົງໄສວ່າຕິດພະຍາດລະບາດສັດ** ໝາຍເຖິງ ສັດທີ່ໄດ້ສຳພັດກັບສັດທີ່ເຈັບ ຫລື ຕາຍຍ້ອນພະຍາດລະບາດສັດ ຫລື ພົວພັນກັບພາຫະນຳເຊື້ອພະຍາດ;
7. **ການຢັ້ງຢືນການເກີດພະຍາດ** ໝາຍເຖິງ ການແຈ້ງການ ຢ່າງເປັນທາງການ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ກ່ຽວກັບການພົບເຊື້ອທີ່ເປັນສາເຫດ ຂອງພະຍາດ ໂດຍອີງຕາມຜົນຂອງການບົ່ງມະຕິ ຈາກຫ້ອງວິໄຈພະຍາດສັດທີ່ຮັບຮູ້ຢ່າງເປັນທາງການ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
8. **ການນຳໃຊ້ມາດຕະການ** ໝາຍເຖິງ ການກຳນົດ ແລະ ນຳໃຊ້ນິຕິກຳ, ມາດຕະຖານ, ຂັ້ນຕອນປະຕິບັດ ເພື່ອກັນ ຫລື ຄວບຄຸມພະຍາດສັດ;
9. **ພະຍາດສັດຕ່າງຖິ່ນ** ໝາຍເຖິງ ພະຍາດສັດໃດໜຶ່ງ ທີ່ເກີດຢູ່ປະເທດອື່ນ ຊຶ່ງບໍ່ເຄີຍເກີດຂຶ້ນ ຫລື ບໍ່ມີໃນ ສ ປປ ລາວ;
10. **ເຂດປອດພະຍາດສັດ** ໝາຍເຖິງ ຂອບເຂດໃດໜຶ່ງ ທີ່ມີການກຳນົດ ຢ່າງຊັດເຈນ ຢູ່ພາຍໃນປະເທດ ແລະ ມີການປະກາດ ຢ່າງເປັນທາງການວ່າ ເປັນເຂດທີ່ບໍ່ມີ ຫລື ບໍ່ເກີດພະຍາດສັດໃດໜຶ່ງ ໃນໄລຍະເວລາທີ່ແນ່ນອນໃດໜຶ່ງ ຕາມມາດຕະຖານຂອງອົງການພະຍຸສັດສາກົນ. ເຂດດັ່ງກ່າວຕ້ອງມີການນຳໃຊ້ມາດຕະການດ້ານສັດຕະວະແພດ ຢ່າງມີປະສິດທິພາບ ແລະ ເຂັ້ມງວດ ເພື່ອຄວບຄຸມການ ລ້ຽງສັດ ແລະ ການນຳໃຊ້ຜະລິດຕະພັນສັດ ລວມທັງການຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ແນໃສ່ຮັບປະກັນບໍ່ໃຫ້ມີພະຍາດສັດເກີດຂຶ້ນ ຢູ່ໃນເຂດດັ່ງກ່າວ;

11. **ເຂດກັນຊົນ** ໝາຍເຖິງ ຂອບເຂດທີ່ກຳນົດຂຶ້ນ ຢ່າງຊັດເຈນ ຊຶ່ງຕັ້ງຢູ່ຮອບນອກຂອງເຂດ ທີ່ປະກາດເປັນເຂດປອດພະຍາດລະບາດສັດ ຫລື ເຂດທີ່ປະກາດເປັນເຂດພະຍາດລະບາດສັດໃດໜຶ່ງ. ເຂດກັນຊົນຂອງເຂດປອດພະຍາດລະບາດສັດ ແມ່ນເຂດທີ່ປະກາດເປັນເຂດເຝົ້າລະວັງ ແລະ ກັນພະຍາດລະບາດສັດ ບໍ່ໃຫ້ເຂົ້າໄປໃນເຂດປອດພະຍາດ ສຳລັບເຂດກັນຊົນ ຂອງເຂດທີ່ປະກາດເປັນເຂດພະຍາດລະບາດສັດ ແມ່ນເຂດທີ່ປະກາດເປັນເຂດເຝົ້າລະວັງ ແລະ ກັນພະຍາດລະບາດສັດ ແນໃສ່ຄວບຄຸມ, ຈຳກັດພະຍາດ ບໍ່ໃຫ້ແຜ່ຂະຫຍາຍອອກໄປສູ່ເຂດທີ່ບໍ່ມີການລະບາດຂອງພະຍາດລະບາດສັດ;
12. **ການກັກກັນສັດ** ໝາຍເຖິງ ການຂັງສັດໄວ້ ເພື່ອໃຫ້ສັດໄດ້ພັກຜ່ອນ ໃຫ້ອາຫານ ແລະ ນ້ຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ວັກໜຶ່ງ ຂໍ້ 1 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເພື່ອເຝົ້າລະວັງ, ກວດສຸຂະພາບສັດ, ວິໄຈ ແລະ ຢັ້ງຢືນ, ສັກຢາກັນ, ປິ່ນປົວ ແລະ ຂ້າເຊື້ອພະຍາດ;
13. **ການຂ້າເຊື້ອ** ໝາຍເຖິງ ການນຳໃຊ້ວິທີການທາງວັດຖຸ ຫລື ໃຊ້ສານເຄມີ ເພື່ອຂ້າ ແລະ ທຳລາຍເຊື້ອພະຍາດ ຫລື ແມ່ກາຝາກຂອງສັດ ຊຶ່ງຕ້ອງປະຕິບັດພາຍຫລັງການລ້າງ, ການອະນາໄມ ຍົກເວັ້ນ ກໍລະນີຈຳເປັນ ອາດຂ້າເຊື້ອໂດຍກົງກໍໄດ້;
14. **ເຂດແດງ** ໝາຍເຖິງ ຂອບເຂດທີ່ມີການນຳໃຊ້ມາດຕະການຄວບຄຸມພະຍາດລະບາດສັດຢ່າງເຂັ້ມງວດ ເປັນຕົ້ນ ເຂດທີ່ມີການລະບາດຂອງພະຍາດລະບາດສັດ, ບໍລິເວນທີ່ສົງໄສວ່າ ມີການປົນເປື້ອນ ດ້ວຍເຊື້ອພະຍາດ ຫລື ໄດ້ຮັບການຢັ້ງຢືນວ່າ ພົບເຊື້ອພະຍາດລະບາດສັດໃດໜຶ່ງຈາກຫ້ອງວິໄຈພະ ຍາດສັດ;
15. **ເຂດເຫລືອງ** ໝາຍເຖິງ ຂອບເຂດອ້ອມຮອບເຂດແດງ ທີ່ກຳນົດຂຶ້ນ ເພື່ອຕິດຕາມ, ເຝົ້າລະວັງພະຍາດສັດ ຢ່າງໃກ້ຊິດ ທີ່ຢູ່ໃກ້ເຂດແດງ ໂດຍນຳໃຊ້ມາດຕະການພື້ນຖານທາງດ້ານລະບາດວິທະຍາ.

**ມາດຕາ 4. ຫລັກການພື້ນຖານໃນການກຳນົດມາດຕະການກັນ ແລະ ຄວບຄຸມພະຍາດສັດ**

ການກຳນົດມາດຕະການກັນ ແລະ ຄວບຄຸມພະຍາດສັດ ໃຫ້ປະຕິບັດຕາມຫລັກການພື້ນຖານ ດັ່ງນີ້:

1. ກຳນົດມາດຕະການການກັນ ແລະ ຄວບຄຸມພະຍາດສັດ ຊຶ່ງຕ້ອງປະຕິບັດ ດັ່ງນີ້:

- ກຳນົດ ຫລື ນຳໃຊ້ມາດຕະການເທົ່າທີ່ຈຳເປັນເທົ່ານັ້ນ ເພື່ອກັນ ແລະ ຄວບຄຸມພະຍາດສັດ;
- ປະເມີນຄວາມສ່ຽງ ແລະ ໃຫ້ສອດຄ່ອງກັບຄວາມສ່ຽງນັ້ນ;
- ບໍ່ເຄັ່ງຄັດ ຫລື ບໍ່ເຂັ້ມງວດເກີນຄວາມຈຳເປັນ ແລະ ບໍ່ເປັນການສ້າງອຸປະສັກ ທີ່ບໍ່ຈຳເປັນໃນການຄ້າ;
- ບໍ່ຈຳແນກລະຫວ່າງມາດຕະການກັນ ແລະ ຄວບຄຸມພະຍາດສັດ ຢູ່ພາຍໃນ ຫລື ຕ່າງປະເທດ ຊຶ່ງ ມີເງື່ອນໄຂ ຂອງການກັນ ແລະ ຄວບຄຸມພະຍາດທີ່ຄືກັນ.

2. ຮັບຮູ້ຄວາມເທົ່າທຽມ ຂອງມາດຕະການກັນ ແລະ ຄວບຄຸມພະຍາດສັດ ຂອງປະເທດສົ່ງອອກ ຊຶ່ງສາມາດຢັ້ງຢືນໄດ້ວ່າ ມາດຕະການນັ້ນ ເທົ່າທຽມກັບມາດຕະການກັນ ແລະ ຄວບຄຸມພະຍາດ

ສັດ ຂອງ ສປປ ລາວ ຫລື ສອດຄ່ອງກັບລະດັບຂອງມາດຕະການປ້ອງກັນທີ່ເໝາະສົມ ຂອງ ສປປ ລາວ;

3. ຮັບຮູ້ມາດຕະການກັນ ແລະ ຄວບຄຸມພະຍາດສັດ ຂອງຕ່າງປະເທດ ບົນພື້ນຖານການຕົກລົງຮ່ວມມືກັນ ຊຶ່ງມາດຕະຖານດັ່ງກ່າວ ຕ້ອງສອດຄ່ອງກັບລະດັບການປ້ອງກັນຄວາມສ່ຽງ ຂອງ ສປປ ລາວ ກຳນົດ.

### ມາດຕາ 5. ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບສຳນັກງານ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ກຸ່ມລ້ຽງສັດ, ສະມາຄົມລ້ຽງສັດ, ສະຫະກອນ, ບຸກຄົນ ຫລື ນິຕິບຸກຄົນທີ່ພົວພັນເຖິງ ການກັນ, ການຄວບຄຸມ ແລະ ກຳຈັດພະຍາດ, ການຄຸ້ມຄອງການລ້ຽງສັດ ແລະ ການສັດຕະວະແພດ ໃນ ສປປ ລາວ.

## ໝວດທີ 2
## ການກັນພະຍາດສັດ

### ມາດຕາ 6. ວິທີການກັນພະຍາດສັດ

ການກັນພະຍາດສັດ ໃຫ້ເອົາໃຈໃສ່ປະຕິບັດ ຕາມວິທີການ ດັ່ງນີ້:

1. ມີສະຖານທີ່ລ້ຽງສັດທີ່ເໝາະສົມ, ໃຫ້ອາຫານ ແລະ ນ້ຳທີ່ມີຄຸນະພາບ, ພຽງພໍ ແລະ ຫລີກລ້ຽງການສຳຜັດກັບປັດໄຈສ່ຽງ ທີ່ພາໃຫ້ເກີດພະຍາດສັດ;
2. ສັກຢາກັນພະຍາດລະບາດສັດໃຫ້ສັດລ້ຽງ ຢ່າງເປັນປົກກະຕິ;
3. ເຝົ້າລະວັງ ແລະ ຕິດຕາມສັດລ້ຽງ ໃນກໍລະນີເຫັນວ່າ ມີອາການຜິດປົກກະຕິ ກໍຕ້ອງກັກກັນ ຫລື ແຍກປ່ຽວສັດທີ່ເຈັບ ຫລື ສົງໄສວ່າ ຕິດເຊື້ອພະຍາດລະບາດສັດ ເພື່ອປິ່ນປົວ, ກຳຈັດ ຫລື ທຳລາຍ ຢ່າງທັນການ.

### ມາດຕາ 7. ການກຳນົດບັນຊີພະຍາດສັດ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ ເປັນຜູ້ກຳນົດບັນຊີພະຍາດສັດ ໂດຍອີງຕາມລາຍຊື່ພະຍາດທີ່ຈຳເປັນຕ້ອງແຈ້ງ ຂອງອົງການພະຍຸສັດສາກົນ ຫລື ພະຍາດສັດໃດໜຶ່ງ ທີ່ເກີດຂຶ້ນໃໝ່ ຫລື ພະຍາດສັດທີ່ບໍ່ທັນຮູ້ຈັກ ບົນພື້ນຖານການວິເຄາະຄວາມສ່ຽງ ແລະ ມີການປັບປຸງແກ້ໄຂ ເປັນແຕ່ລະໄລຍະ ພ້ອມທັງເຜີຍແຜ່ບັນຊີພະຍາດດັ່ງກ່າວ ໃຫ້ທົ່ວປວງຊົນຊາບ ຢ່າງກວ້າງຂວາງ.

### ມາດຕາ 8. ການເຝົ້າລະວັງ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ ເປັນຜູ້ສ້າງລະບົບການຕິດຕາມເຝົ້າລະວັງ, ລະບົບການເຕືອນ ແລະ ລະບົບການສືບຄົ້ນຫາພະຍາດກ່ອນລ່ວງໜ້າ ຕາມຊະນິດພະຍາດ ແລະ ບັນຊີພະຍາດທີ່ໄດ້ກຳນົດໄວ້ນັ້ນ ໂດຍອີງໃສ່ແຫລ່ງຊັບພະຍາກອນ ແລະ ຄວາມອາດສາມາດຕົວຈິງ ເປັນຕົ້ນ ການເກັບກຳຂໍ້ມູນ, ການເຜີຍແຜ່, ການນຳໃຊ້ຂໍ້ມູນກ່ຽວກັບການລະບາດວິທະຍາຂອງພະຍາດ ແລະ ຂໍ້ມູນທີ່ໄດ້ຈາກການເຝົ້າລະວັງ ເພື່ອປັບປຸງແກ້ໄຂບັນຊີພະຍາດສັດ ເປັນແຕ່ລະໄລຍະ.

ພະນັກງານສັດຕະວະແພດ ທີ່ຮັບຜິດຊອບການເຝົ້າລະວັງ ຕ້ອງເຮັດບົດລາຍງານຜົນຂອງການຕິດຕາມ, ການກວດກາ ແລະ ການເຝົ້າລະວັງພະຍາດ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ.

ໃນກໍລະນີມີການລາຍງານກ່ຽວກັບການເກີດພະຍາດລະບາດສັດ ໃຫ້ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ປະຕິບັດ ດັ່ງນີ້:

1. ກວດກາ ແລະ ເຝົ້າລະວັງ;
2. ເກັບຕົວຢ່າງ;
3. ກໍານົດສາເຫດຂອງການເກີດພະຍາດລະບາດສັດ;
4. ນໍາໃຊ້ມາດຕະການກັນ ແລະ ຄວບຄຸມພະຍາດລະບາດສັດ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

### ມາດຕາ 9. ການສັກຢາກັນພະຍາດສັດ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ ເປັນຜູ້ວາງແຜນຍຸດທະສາດ ແລະ ກໍານົດລະບຽບການສະເພາະກ່ຽວກັບການສັກຢາກັນພະຍາດສັດ ໂດຍອີງໃສ່ຂໍ້ມູນກ່ຽວກັບສະພາບການລະບາດຂອງພະຍາດລະບາດສັດທີ່ຜ່ານມາ ເພື່ອກໍານົດເຂດ, ກຸ່ມເປົ້າໝາຍ ແລະ ຊະນິດຢາກັນພະຍາດລະບາດສັດ ໃນແຕ່ລະໄລຍະ ເປັນຕົ້ນ ຂອບເຂດທີ່ມີຄວາມສ່ຽງຈາກການລະບາດຂອງພະຍາດລະບາດສັດ, ຂອບເຂດທີ່ຖືກກໍານົດໃຫ້ເປັນເຂດພັດທະນາການລ້ຽງສັດ ຫລື ເປັນເຂດທີ່ຜະລິດ ເພື່ອສົ່ງອອກ.

ຢາກັນພະຍາດລະບາດສັດແຕ່ລະຊະນິດທີ່ນໍາໃຊ້ ຕ້ອງໄດ້ຮັບການອະນຸຍາດ, ກວດກາ ແລະ ຕິດຕາມການນໍາໃຊ້ ຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດວະວະແພດ ຢ່າງເປັນປົກກະຕິ ແລະ ຜູ້ນໍາໃຊ້ ກໍຕ້ອງປະຕິບັດຕາມຄໍາແນະນໍາຂອງຜູ້ຜະລິດ ທີ່ຕິດມານໍາກ່ອງຢານັ້ນ ຢ່າງເຂັ້ມງວດ.

## ໝວດທີ 3
## ການຄວບຄຸມພະຍາດສັດ

### ມາດຕາ 10. ການແຈ້ງການກ່ຽວກັບການລະບາດຂອງພະຍາດລະບາດສັດ

ເມື່ອມີການຢັ້ງຢືນ ຈາກເຈົ້າໜ້າທີ່ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແລະ ມີການປະກາດເຂດພະຍາດລະບາດສັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 43 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນທີ່ມີການລະບາດຂອງພະຍາດລະບາດສັດ ອອກປະກາດແຈ້ງການໃຫ້ປວງຊົນຊາບ ແລະ ໃຫ້ອອກແຈ້ງການ ດັ່ງນີ້:

1. ກໍານົດເຂດ ທີ່ມີການຕິດເຊື້ອພະຍາດ ຫລື ເຂດແດງ ຫລື ເຂດເຫລືອງ;
2. ກໍານົດໜ້າທີ່ຂອງບຸກຄົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ທີ່ຢູ່ໃນເຂດດັ່ງກ່າວ;
3. ຫ້າມຄ້າຂາຍ, ຂົນສົ່ງ, ເຄື່ອນຍ້າຍ ສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ພາຍໃນເຂດ ຫລື ນອກເຂດ ທີ່ປະກາດເປັນເຂດລະບາດຂອງພະຍາດລະບາດສັດ.

ມາດຕາ 11. ການນຳໃຊ້ມາດຕະການຄວບຄຸມພະຍາດ ແລະ ສ້າງເຂດປອດພະຍາດສັດ

ການນຳໃຊ້ມາດຕະການຄວບຄຸມພະຍາດລະບາດສັດ ແມ່ນໃຫ້ນຳໃຊ້ມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ແລະ ຍັງຕ້ອງປະຕິບັດຕາມການແນະນຳຂອງອົງການພະຍຸສັດສາກົນ ໂດຍສອດຄ່ອງກັບແຜນຍຸດທະສາດໃນການຈຳກັດ ແລະ ລົບລ້າງພະຍາດລະບາດສັດ.

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ເປັນຜູ້ກຳນົດລະບຽບການສະເພາະກ່ຽວກັບການສ້າງເຂດປອດພະຍາດສັດ.

ມາດຕາ 12. ການຄວບຄຸມສັດທີ່ສົງໄສ ຫລື ຕິດເຊື້ອພະຍາດ

ເມື່ອເຈົ້າໜ້າທີ່ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໄດ້ຮັບການແຈ້ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດແລ້ວ ໃຫ້ດຳເນີນການຄວບຄຸມ ຕາມແຕ່ລະກໍລະນີ ດັ່ງນີ້:

- ສືບສວນສະພາບການ ແລະ ເກັບຕົວຢ່າງຈາກສັດ ເພື່ອນຳໄປວິໄຈ;
- ຈຳກັດຂອບເຂດການເຄື່ອນໄຫວຂອງສັດ ແລະ ຫ້າມເຄື່ອນຍ້າຍຜະລິດຕະພັນສັດ ຫລື ສັ່ງໃຫ້ເອົາສັດໄປຍັງສະຖານທີ່ກັກກັນ ຫລື ແຍກປ່ຽວສັດ;
- ປິ່ນປົວສັດເຈັບ ຫລື ແນະນຳໃຫ້ເຈົ້າຂອງສັດປິ່ນປົວ ດ້ວຍຕົນເອງ;
- ທຳລາຍສັດ ທີ່ບໍ່ສາມາດປິ່ນປົວໄດ້ ຫລື ຕິດເຊື້ອພະຍາດລະບາດສັດ ແລະ ທຳລາຍຜະລິດຕະພັນສັດ ທີ່ມີການປົນເປື້ອນດ້ວຍເຊື້ອພະຍາດລະບາດສັດ;
- ນຳໃຊ້ວິທີການຄວບຄຸມອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ຕ່າງຫາກ.

ໃນກໍລະນີສົງໄສວ່າ ສັດຕິດເຊື້ອພະຍາດລະບາດສັດ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ສັ່ງຫ້າມເຄື່ອນຍ້າຍສັດ, ຜະລິດຕະພັນສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ, ສິ່ງຂອງກ່ຽວຂ້ອງກັບສັດ ແລະ ວັດຖຸທີ່ມີການພົວພັນກັບສັດທີ່ສົງໄສດັ່ງກ່າວ ຊົ່ວຄາວ ຊຶ່ງມີຜົນບັງຄັບຈົນເຖິງວັນທີ່ໄດ້ຮັບການຢັ້ງຢືນຜົນການວິໄຈ ຢ່າງເປັນທາງການ ກ່ຽວກັບການຕິດເຊື້ອ ຫລື ບໍ່ຕິດເຊື້ອພະຍາດ ດັ່ງກ່າວ.

ໃນກໍລະນີໄດ້ຮັບການຢັ້ງຢືນຜົນການວິໄຈວ່າ ມີການຕິດເຊື້ອພະຍາດ ຢ່າງເປັນທາງການ ຈາກຫ້ອງວິໄຈແລ້ວ ໃຫ້ພະນັກງານສັດຕະວະແພດ ແຈ້ງໃຫ້ບຸກຄົນທີ່ກ່ຽວຂ້ອງ ຊາບທັນທີ ແລະ ປະຕິບັດຕາມແຜນສຸກເສີນຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ພ້ອມທັງໃຫ້ພະນັກງານສັດຕະວະແພດ ປະຕິບັດຕາມມາດຕາ 10 ແລະ ມາດຕາ 11 ຂອງດຳລັດສະບັບນີ້ ຢ່າງເຂັ້ມງວດ.

ສຳລັບການເກັບ ແລະ ການນຳສິ່ງຕົວຢ່າງຈາກສັດ ແລະ ຜະລິດຕະພັນສັດທີ່ສົງໄສວ່າ ຕິດເຊື້ອພະຍາດ ເປັນຕົ້ນ ສິ້ນສ່ວນ, ຊາກສັດ ຫລື ທັງໝົດຕົວສັດ ຕ້ອງມີການຫຸ້ມຫໍ່, ຕິດສະຫລາກກຳກັບ ເພື່ອຮັບປະກັນການປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ສ່ວນຄອກສັດ, ສະຖານທີ່ຂັງສັດ, ບໍລິເວນອ້ອມຂ້າງຄອກສັດ ຫລື ພາຫານະຂົນສົ່ງ,ເຄື່ອງມືທີ່ນຳໃຊ້ ຫລື ສິ່ງຂອງທີ່ປົນເປື້ອນ ຫລື ສົງໄສວ່າ ມີການປົນເປື້ອນເຊື້ອພະຍາດໃດໜຶ່ງ ກໍຕ້ອງມີການອະນາໄມ, ຂ້າເຊື້ອ ຫລື ທຳລາຍຖິ້ມ ຕາມຫລັກວິຊາການທີ່ໄດ້ກຳນົດໄວ້.

## ມາດຕາ 13. ການຄວບຄຸມພະຍາດລະບາດສັດໃນເຂດແດງ

ເມື່ອມີການປະກາດເປັນເຂດພະຍາດລະບາດສັດ ໃຫ້ເຈົ້າໜ້າທີ່ສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນ, ເມືອງ, ເທດສະບານ ແລະ ບ້ານ ເພື່ອຕິດຕາມ ຢ່າງໃກ້ຊິດ ແລະ ນຳໃຊ້ມາດຕະການຄວບຄຸມພະຍາດລະບາດສັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້ ແລະ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ສ້າງຕັ້ງຈຸດຄວບຄຸມສັດ, ຜະລິດຕະພັນສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສິ່ງຂອງທີ່ພົວພັນກັບສັດ ເພື່ອກວດກາ ແລະ ຂ້າເຊື້ອພາຫານະເຂົ້າ ແລະ ອອກ ໃນເຂດແດງດັ່ງກ່າວ;
- ເກັບ ແລະ ສົ່ງຕົວຢ່າງ ໄປຍັງຫ້ອງວິໄຈພະຍາດສັດ ເພື່ອຊອກຫາເຊື້ອພະຍາດ ແລະ ກຳນົດແຫລ່ງ ທີ່ມາຂອງການລະບາດ;
- ອອກຄຳສັ່ງຫ້າມເຄື່ອນຍ້າຍສັດ, ຜະລິດຕະພັນສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ, ສິ່ງຂອງທີ່ກ່ຽວຂ້ອງກັບສັດ ແລະ ວັດຖຸທີ່ມີການພົວພັນກັບສັດ;
- ເຝົ້າລະວັງ ເພື່ອຕິດຕາມວິວັດທະນາການຂອງພະຍາດ ແລະ ກຳນົດປັດໄຈສ່ຽງທັງໝົດ ທີ່ພົວພັນກັບການລະບາດຂອງພະຍາດນັ້ນ;
- ກັກກັນ ຫລື ແຍກປ່ຽວສັດທີ່ຕິດພະຍາດ ຫລື ສັ່ງໃຫ້ເຈົ້າຂອງສັດ ຫລື ບຸກຄົນທີ່ຮັບຜິດຊອບກັກກັນ ຫລື ແຍກປ່ຽວສັດທີ່ຕິດເຊື້ອພະຍາດ ຫລື ສັດອື່ນ ທີ່ສົງໄສວ່າຕິດເຊື້ອພະຍາດໃນສະຖານທີ່ກັກກັນສັດ;
- ອອກຄຳສັ່ງໃຫ້ເຈົ້າຂອງສັດ ຫລື ບຸກຄົນທີ່ຮັບຜິດຊອບກ່ຽວກັບສັດ ຕັ້ງຈຸດຂ້າເຊື້ອພະຍາດ ຢູ່ທາງເຂົ້າ ແລະ ອອກ ຂອງສະຖານທີ່ ທີ່ມີການຢັ້ງຢືນວ່າ ມີຝູງສັດທີ່ຕິດເຊື້ອ ແລະ ຝູງສັດທີ່ແຂງແຮງ;
- ທຳລາຍສັດ ທີ່ຕິດເຊື້ອພະຍາດລະບາດສັດ ຊຶ່ງບໍ່ສາມາດປິ່ນປົວໄດ້.

ໃນການຄວບຄຸມພະຍາດລະບາດສັດໃນເຂດແດງ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ປະຕິບັດຂັ້ນຕອນການຄວບຄຸມພະຍາດລະບາດສັດໄດ້ ຈົນເຖິງວັນປະກາດຍົກເລີກເຂດພະຍາດລະບາດສັດ.

ການນຳໃຊ້ມາດຕະການຄວບຄຸມພະຍາດລະບາດສັດໃນເຂດແດງ ຕ້ອງມີການເຜີຍແຜ່ຜ່ານທາງວິທະຍຸ, ໜັງສືພິມ ແລະ ວິທີການອື່ນ ທີ່ເຫັນວ່າເໝາະສົມ ແລະ ສັດຕະວະແພດບ້ານ ກໍຕ້ອງເຜີຍແຜ່ ແລະ ສະໜອງຂໍ້ມູນໃຫ້ແກ່ເຈົ້າຂອງສັດ ແລະ ບຸກຄົນທີ່ຮັບຜິດຊອບທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດມາດຕະການຄວບຄຸມຢ່າງເຄັ່ງຄັດ.

## ມາດຕາ 14. ການຄວບຄຸມພະຍາດລະບາດສັດໃນເຂດເຫລືອງ

ເມື່ອມີການປະກາດເປັນເຂດຄວບຄຸມ ແລະ ຕິດຕາມພະຍາດລະບາດສັດແລ້ວ ໃຫ້ເຈົ້າໜ້າທີ່ສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງແຂວງ, ນະຄອນ, ເມືອງ, ເທດສະບານ ແລະບ້ານ ເພື່ອຕິດຕາມຢ່າງໃກ້ຊິດ ແລະ ນຳໃຊ້ມາດຕະການຄວບຄຸມພະຍາດລະບາດສັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້

ແລະ ໃຫ້ປະຕິບັດຕາມຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງດຳລັດສະບັບນີ້ ຍົກເວັ້ນການສ້າງຈຸດກວດກາ ແລະ ຂ້າເຊື້ອ, ການທຳລາຍສັດທີ່ຕິດເຊື້ອພະຍາດສັດຖິ້ມ.

ການຄວບຄຸມພະຍາດລະບາດສັດໃນເຂດດັ່ງກ່າວ ຕ້ອງມີການສັກຢາກັນພະຍາດແບບວົງແຫວນ ໃນກໍລະນີເຫັນວ່າ ມີຄວາມຈຳເປັນ ເພື່ອຮັບປະກັນໃຫ້ສັດທີ່ມີສຸຂະພາບແຂງແຮງ.

ການນຳໃຊ້ມາດຕະການຄວບຄຸມພະຍາດລະບາດສັດໃນເຂດເຫລືອງ ຕ້ອງມີການເຜີຍແຜ່ຜ່ານທາງວິທະຍຸ, ໜັງສືພິມ ແລະ ວິທີການອື່ນ ທີ່ເຫັນວ່າເໝາະສົມ ແລະ ສັດຕະວະແພດບ້ານ ກໍຕ້ອງເຜີຍແຜ່ ແລະ ສະໜອງຂໍ້ມູນໃຫ້ແກ່ເຈົ້າຂອງສັດ ແລະ ບຸກຄົນທີ່ຮັບຜິດຊອບທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດມາດຕະການຄວບຄຸມຢ່າງເຄັ່ງຄັດ.

### ມາດຕາ 15. ການປະກາດຍົກເລີກເຂດພະຍາດລະບາດສັດ

ເມື່ອເຫັນວ່າ ມີການຫລຸດຜ່ອນຄວາມສ່ຽງໃນການລະບາດຂອງພະຍາດສັດ ທີ່ເຫັນໄດ້ຢ່າງ ຈະແຈ້ງ ພາຍຫລັງ ສາມສິບວັນ ນັບແຕ່ວັນທີ່ສັດເຈັບໂຕສຸດທ້າຍ ມີສຸຂະພາບແຂງແຮງດີ ແລະ ບໍ່ມີສັດໂຕອື່ນເຈັບ ຫລື ຕາຍຕື່ມອີກ ແລະ ກໍເຫັນວ່າ ຂັ້ນຕອນການຄວບຄຸມພະຍາດລະບາດສັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ສຳລັບເຂດແດງ ແລະ ມາດຕາ 14 ສຳລັບເຂດເຫລືອງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຄັ່ງຄັດ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ນຳສະເໜີຕໍ່ອົງການທີ່ມີໜ້າທີ່ຮັບຜິດຊອບໃນການປະກາດເຂດພະຍາດລະບາດສັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ອອກປະກາດຍົກເລີກເຂດພະຍາດລະບາດສັດ.

### ມາດຕາ 16. ການທຳລາຍ ຫລື ກຳຈັດສັດທີ່ເປັນພະຍາດ

ພະນັກງານສັດຕະວະແພດ ອາດທຳລາຍ ຫລື ກຳຈັດສັດ ທີ່ໄດ້ຮັບຜົນກະທົບຈາກພະຍາດ ຫລື ສົງໄສວ່າ ຕິດພະຍາດ ຢູ່ເຂດແດງ ແລະ ເຂດເຫລືອງ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ.

ພະນັກງານສັດຕະວະແພດ ອາດອອກຄຳສັ່ງເປັນລາຍລັກອັກສອນ ໃຫ້ເຈົ້າຂອງສັດ ຫລື ບຸກຄົນທີ່ຮັບຜິດຊອບ ນຳເອົາສັດທີ່ຕິດເຊື້ອພະຍາດ, ຜະລິດຕະພັນສັດ ແລະ ວັດຖຸທີ່ປົນເປື້ອນດ້ວຍເຊື້ອພະຍາດ ຫລື ສິ່ງຂອງອື່ນທີ່ມີການສຳພັດກັບສັດທີ່ຕິດພະຍາດລະບາດສັດ ຫລື ສິ່ງທີ່ຈະກໍ່ໃຫ້ເກີດພະຍາດລະບາດສັດ ໄປທຳລາຍຖິ້ມ.

ສັດທີ່ຕາຍ ດ້ວຍພະຍາດລະບາດສັດ, ສັດທີ່ຖືກທຳລາຍ ຫລື ກຳຈັດຖິ້ມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໃຫ້ນຳເອົາໄປເຜົາ ຫລື ຝັງ ທັນທີ ຕາມຫລັກວິຊາການດ້ານສັດຕະວະແພດ ແລະ ຕາມຄຳແນະນຳຂອງເຈົ້າໜ້າທີ່ສັດຕະວະແພດ ຢ່າງເຄັ່ງຄັດ.

### ມາດຕາ 17. ການຊົດເຊີຍ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ເປັນຜູ້ກຳນົດຂັ້ນຕອນ, ວິທີການ ແລະ ສ້າງລະບົບສຳລັບການຊົດເຊີຍ ທີ່ເໝາະສົມ ໃນກໍລະນີມີການທຳລາຍ ຫລື ການກຳຈັດສັດ, ຜະລິດຕະພັນສັດ ແລະ ວັດຖຸທີ່ປົນເປື້ອນດ້ວຍເຊື້ອພະຍາດ ຫລື ສິ່ງຂອງອື່ນທີ່ມີການສຳພັດກັບສັດທີ່ຕິດເຊື້ອພະຍາດລະບາດສັດ ຫລື ສິ່ງທີ່ຈະກໍ່ໃຫ້ເກີດພະຍາດລະບາດສັດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 18. ການແຈ້ງການໄປຍັງອົງການພະຍຸສັດສາກົນ ແລະ ປະເທດໃກ້ຄຽງ**

ເມື່ອໄດ້ຮັບການຢັ້ງຢືນຜົນການວິໄຈ ຢ່າງເປັນທາງການຈາກຫ້ອງວິໄຈ ແລະ ມີການປະກາດວ່າ ມີການເກີດພະຍາດລະບາດສັດ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແຈ້ງການ ໄປຍັງອົງການພະຍຸສັດສາກົນ ທັນທີ.

ໃນກໍລະນີມີການປະກາດວ່າ ມີການເກີດພະຍາດລະບາດສັດ ຢູ່ເມືອງທີ່ມີຊາຍແດນຕິດຈອດກັບປະເທດໃກ້ຄຽງ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແຈ້ງການໄປຍັງອົງການທີ່ຮັບຜິດຊອບຂອງປະເທດດັ່ງກ່າວ ຊາບ.

**ມາດຕາ 19. ພັນທະຂອງເຈົ້າຂອງສັດ ແລະ ບຸກຄົນທີ່ຮັບຜິດຊອບກ່ຽວກັບສັດ**

ເຈົ້າຂອງສັດ ແລະ ບຸກຄົນທີ່ຮັບຜິດຊອບກ່ຽວກັບສັດ ມີ ພັນທະ ດັ່ງນີ້:

1. ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ກັບການຄອບຄອງສັດຂອງຕົນ;
2. ແຈ້ງຈຳນວນສັດທັງໝົດຂອງຕົນ, ຈຳນວນສັດເຈັບ, ຈຳນວນສັດຕາຍ ຕາມຄວາມເປັນຈິງ;
3. ປະຕິບັດແຜນການ ແລະ ມາດຕະການຄວາມປອດໄພດ້ານຊີວະພາບທີ່ດີ ທີ່ກຳນົດໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແລະ ຄຳສັ່ງ ຫລື ຄຳແນະນຳອື່ນ ທີ່ອອກໂດຍພະນັກງານສັດຕະວະແພດ ເພື່ອຢຸດຕິການລະບາດຂອງພະຍາດ ຫລື ທຳລາຍ ຫລື ກຳຈັດສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
4. ແຍກສັດທີ່ຕິດເຊື້ອພະຍາດ ຫລື ສົງໄສວ່າ ຕິດເຊື້ອພະຍາດລະບາດສັດອອກຈາກຝູງສັດ ແລ້ວລາຍງານ ຕໍ່ເຈົ້າໜ້າທີ່ສັດຕະວະແພດຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ບ່ອນທີ່ໃກ້ສຸດ ເພື່ອກວດສຸຂະພາບສັດ;
5. ປິ່ນປົວສັດເຈັບ ຕາມຫລັກວິຊາການສັດຕະວະແພດ ແລະ ຄຳແນະນຳຂອງເຈົ້າໜ້າທີ່ສັດຕະວະແພດ;
6. ໃຫ້ການຮ່ວມມືກັບພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃນການຈັດຕັ້ງປະຕິບັດມາດຕະການກັນ ແລະ ຄວບຄຸມພະຍາດລະບາດສັດ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 20. ໜ້າທີ່ໃນການລາຍງານ**

ໃນກໍລະນີເຫັນວ່າ ສັດຂອງຕົນເຈັບ ເປັນຈຳນວນຫລວງຫລາຍ ຫລື ຕາຍຢ່າງຕໍ່ເນື່ອງ ແລະ ສັດເຫລົ່ານັ້ນ ກໍສະແດງອາການຂອງພະຍາດລະບາດສັດ ໃຫ້ເຈົ້າຂອງສັດ ຫລື ບຸກຄົນທີ່ຮັບຜິດຊອບສັດ ແຈ້ງຕໍ່ພະນັກງານ ຫລື ເຈົ້າໜ້າທີ່ສັດຕະວະແພດຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ທີ່ໃກ້ທີ່ສຸດ ທັນທີ.

ສັດຕະວະແພດບ້ານ, ນາຍບ້ານ, ພະນັກງານ ຫລື ເຈົ້າໜ້າທີ່ສັດຕະວະແພດ ທີ່ໄດ້ຮັບການແຈ້ງນັ້ນ ຕ້ອງແຈ້ງໃຫ້ເຈົ້າຂອງສັດ ແລະ ບຸກຄົນທີ່ຮັບຜິດຊອບສັດ ຢູ່ບ້ານໃກ້ຄຽງຊາບ ພ້ອມທັງລາຍງານໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດເມືອງ, ເທດສະບານຊາບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ໄດ້ກຳນົດໄວ້ ໃນໝວດທີ 4 ຂອງດຳລັດສະບັບນີ້.

ໃນກໍລະນີພະຍາດສັດທີ່ພົບເຫັນນັ້ນ ແມ່ນພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ ລາຍງານກ່ຽວກັບການພົບເຫັນດັ່ງກ່າວໄປຍັງຂະແໜງສາທາລະນະສຸກ ພາຍໃນກໍານົດເວລາ ຊາວສີ່ຊົ່ວໂມງ ພາຍຫລັງທີ່ໄດ້ຮັບການຢັ້ງຢືນຈາກຫ້ອງວິໄຈພະຍາດສັດ ຢ່າງເປັນທາງການ.

**ມາດຕາ 21. ຂໍ້ຫ້າມ**

ຫ້າມເຈົ້າຂອງສັດ ແລະ ບຸກຄົນທີ່ຮັບຜິດຊອບກ່ຽວກັບສັດ ມີການກະທໍາ ດັ່ງນີ້:

1. ບໍລິໂພກ, ຈໍາໜ່າຍ ຫລື ແຈກຢາຍ ສິ້ນສ່ວນໃດໜຶ່ງຂອງສັດ ທີ່ຕິດພະຍາດລະບາດສັດ;
2. ຈໍາໜ່າຍສັດທີ່ຍັງມີຊີວິດ ຫລື ຊາກສັດ ຫລື ພາກສ່ວນໃດໜຶ່ງຂອງສັດ ທີ່ຕິດພະຍາດລະບາດສັດ;
3. ເຄື່ອນຍ້າຍສັດທີ່ຍັງມີຊີວິດ ຫລື ຜະລິດຕະພັນສັດ, ຊາກສັດ ຫລື ສິ້ນສ່ວນຂອງສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ວັດຖຸສິ່ງຂອງທີ່ພົວພັນກັບສັດ, ສິ່ງເສດເຫລືອຈາກສັດ ແລະ ວັດຖຸທີ່ມີການປົນເປື້ອນດ້ວຍເຊື້ອພະຍາດ ເຂົ້າ ຫລື ອອກຈາກເຂດແດງ ຫລື ເຂດເຫລືອງ ໂດຍບໍ່ໄດ້ຮັບການອະນຸຍາດເປັນລາຍລັກອັກສອນ ຈາກພະນັກງານ ຫລື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ປ່ອຍນໍ້າເສຍ ແລະ ສິ່ງເສດເຫລືອ ອອກຈາກຟາມ, ສະຖານທີ່ ຫລື ຄອກສັດ ທີ່ຕິດເຊື້ອພະຍາດ ໂດຍບໍ່ຜ່ານການຂ້າເຊື້ອ ແລະ ບໍາບັດ ຕາມຫລັກວິຊາການ ແລະ ລະບຽບການທີ່ໄດ້ກໍານົດໄວ້;
5. ຖິ້ມຊາກສົບສັດ ແລະ ຜະລິດຕະພັນສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ຫລື ວັດຖຸສິ່ງຂອງທີ່ພົວພັນກ່ຽວກັບສັດທີ່ຕິດເຊື້ອພະຍາດ ຕາມສະຖານທີ່ສາທາລະນະ ແລະ ສະຖານທີ່ອື່ນ ເວັ້ນເສັຽ ແຕ່ສະຖານທີ່ ທີ່ໄດ້ກໍານົດໄວ້ສະເພາະ.

## ໝວດທີ 4
## ການຄຸ້ມຄອງວຽກງານການກັນ ແລະ ຄວບຄຸມພະຍາດສັດ

**ມາດຕາ 22. ອົງການຄຸ້ມຄອງວຽກງານການກັນ ແລະ ຄວບຄຸມພະຍາດສັດ**

ອົງການຄຸ້ມຄອງວຽກງານການກັນ ແລະ ຄວບຄຸມພະຍາດສັດ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຊຶ່ງປະກອບດ້ວຍ:

1. ກະຊວງຊວງກະສິກໍາ ແລະ ປ່າໄມ້ ໂດຍແມ່ນ ກົມລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
2. ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນ ໂດຍແມ່ນ ຂະແໜງລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
3. ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເທດສະບານ ໂດຍແມ່ນ ໜ່ວຍງານລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
4. ໜ່ວຍສະເພາະກິດ;
5. ໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ.

ມາດຕາ 23. ສິດ ແລະ ໜ້າທີ່ຂອງກະຊວງກະສິກຳ ແລະ ປ່າໄມ້

ໃນການກັນ ແລະ ຄວບຄຸມພະຍາດສັດ ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ຄຳແນະນຳ ທາງດ້ານນະໂຍບາຍ ແລະ ວິຊາການ ໃຫ້ແກ່ອົງການຄຸ້ມຄອງວຽກງານ ການລ້ຽງສັດ ແລະ ການສັດຕະວະແພດ ແຂວງ, ນະຄອນ;
2. ຮັບຜິດຊອບ ໃນການພັດທະນາມາດຕະຖານທາງດ້ານວິຊາການ, ນະໂຍບາຍ ຫລື ການຕັດສິນບັນຫາໃດໜຶ່ງ ທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້;
3. ສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ການກັນ ແລະ ຄວບຄຸມພະຍາດສັດ;
4. ວິເຄາະ, ປະເມີນ ແລະ ຕີລາຄາ ຄວາມສ່ຽງກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ;
5. ຊີ້ນຳ, ກວດກາການເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ, ເມືອງ, ເທດສະບານ, ໜ່ວຍສະເພາະກິດ ແລະ ໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ;
6. ສ້າງຕັ້ງດ່ານກວດກາສັດຕະວະແພດ ຊົ່ວຄາວ ໃນກໍລະນີເກີດການລະບາດ ຂອງພະຍາດລະບາດສັດໃດໜຶ່ງ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ແຕ່ງຕັ້ງ ຫລື ປົດຕຳແໜ່ງພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ພັດທະນາ ລະບົບການຄຸ້ມຄອງການກັນ ແລະ ຄວບຄຸມພະຍາດສັດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
9. ປະສານສົມທົບກັບອົງການຈັດຕັ້ງທຸກຂັ້ນ ໃນການເຝົ້າລະວັງ ແລະ ກວດກາການກັນ ແລະ ຄວບຄຸມພະຍາດລະບາດສັດ;
10. ອອກຄຳແນະນຳ ກ່ຽວກັບການກັກກັນສັດໃນສະຖານີກັກກັນສັດ ແລະ ສິ່ງອຳນວຍຄວາມສະດວກອື່ນ;
11. ກວດກາ, ປັບປຸງ ມາດຕະການກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ ເພື່ອຮັບປະກັນການຄວບຄຸມພະຍາດສັດ;
12. ສ້າງ ແລະ ເຜີຍແຜ່ນິຕິກຳ, ລະບຽບການ ກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ;
13. ພົວພັນ ຮ່ວມມື ແລະ ປະສານສົມທົບກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວການກັນ ແລະ ຄວບຄຸມພະຍາດສັດ;
14. ປະສານສົມທົບກັບອົງການຈັດຕັ້ງອື່ນ ຂັ້ນສູນກາງ ທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ;
15. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການຝຶກອົບຮົມໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ;
16. ຈັດງານກິດຈະກຳສັງຄົມຕ່າງໆ ເພື່ອເສີມສ້າງຄວາມຮັບຮູ້ ແລະ ປູກຈິດສຳນຶກກ່ຽວກັບວຽກງານການກັນ ແລະ ຄວບຄຸມພະຍາດສັດ;
17. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ ຂອງ ສປປ ລາວ.

## າ 24. ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ

ໃນການກັນ ແລະ ຄວບຄຸມພະຍາດສັດ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດມາດຕະຖານ ແລະ ຜັນຂະຫຍາຍນະໂຍບາຍທາງດ້ານວິຊາການ ກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ ທີ່ກະຊວງກະສິກຳ ແລະ ປ່າໄມ້ ວາງອອກ;
2. ຊ່ວຍຕິດຕາມການຂົນສົ່ງ, ການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ວັດຖຸທີ່ປົນເປື້ອນດ້ວຍເຊື້ອພະຍາດ ຫລື ສິ່ງຂອງອື່ນ ທີ່ມີການສຳພັດກັບສັດ ທີ່ຕິດເຊື້ອພະຍາດລະບາດສັດ ຫລື ສິ່ງທີ່ຈະກໍ່ໃຫ້ເກີດພະຍາດລະບາດສັດ ເຂົ້າ ຫລື ອອກເຂດແດງ ຫລື ເຂດເຫລືອງ;
3. ສະໜອງຂໍ້ມູນ ແລະ ລາຍງານຕໍ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
4. ເຝົ້າລະວັງ, ຕິດຕາມ ແລະ ລາຍງານກ່ຽວກັບພະຍາດລະບາດສັດ ຕາມແຜນການເຝົ້າລະວັງຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ;
5. ຊີ້ນຳ, ຕິດຕາມ ແລະ ປະສານສົມທົບກັບອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດເມືອງ, ເທດສະບານ ກ່ຽວກັບວຽກງານການກັນ ແລະ ຄວບຄຸມພະຍາດສັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສ້າງລະບຽບການກ່ຽວກັບການການກັນ ແລະ ຄວບຄຸມພະຍາດສັດ ຂອງແຂວງ, ນະຄອນ ພ້ອມທັງເຜີຍແຜ່ ແລະ ໃຫ້ຄຳແນະນຳ ໃນການຈັດຕັ້ງປະຕິບັດລະບຽບການດັ່ງກ່າວ;
7. ປະສານສົມທົບກັບອົງການຈັດຕັ້ງອື່ນ ຂອງແຂວງ, ນະຄອນ ທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບ

ການກັນ ແລະ ຄວບຄຸມພະຍາດສັດ;

8. ປະສານສົມທົບກັບພາກສ່ວນອື່ນ ຂອງແຂວງ, ນະຄອນ ໃນການຝຶກອົບຮົມໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ;
9. ຈັດງານກິດຈະກຳສັງຄົມຕ່າງໆ ເພື່ອເສີມສ້າງຄວາມຮັບຮູ້ ແລະ ປູກຈິດສຳນຶກກ່ຽວກັບວຽກງານ ການກັນ ແລະ ຄວບຄຸມພະຍາດສັດ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 25. ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ**

ໃນການກັນ ແລະ ການຄວບຄຸມພະຍາດສັດ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດມາດຕະຖານ ແລະ ຜັນຂະຫຍາຍນະໂຍບາຍທາງດ້ານວິຊາການກ່ຽວກັບ ການກັນ ແລະ ຄວບຄຸມພະຍາດສັດ ຕາມການຊີ້ນຳຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດແຂວງ, ນະຄອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຊ່ວຍຕິດຕາມການຂົນສົ່ງ, ການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ, ວັດຖຸທີ່ປົນເປື້ອນດ້ວຍເຊື້ອພະຍາດ ຫລື ສິ່ງຂອງອື່ນ ທີ່ມີການສໍາຜັດກັບສັດທີ່ຕິດເຊື້ອພະຍາດລະບາດສັດ ຫລື ສິ່ງທີ່ຈະກໍ່ໃຫ້ເກີດພະຍາດລະບາດສັດ ເຂົ້າ ຫລື ອອກເຂດແດງ ຫລື ເຂດ ເຫລືອງ;
3. ຊີ້ນໍາ, ຕິດຕາມການຈັດຕັ້ງປະຕິບັດການກັນ ແລະ ຄວບຄຸມພະຍາດສັດຂອງໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ປະສານສົມທົບກັບອົງການຈັດຕັ້ງອື່ນຂອງເມືອງ, ເທດສະບານ ທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ;
5. ຕິດຕໍ່ປະສານງານ ກັບອົງການຄຸ້ມຄອງເມືອງ, ເທດສະບານ ກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ;
6. ຈັດງານກິດຈະກໍາສັງຄົມຕ່າງໆ ເພື່ອເສີມສ້າງຄວາມຮັບຮູ້ ແລະ ປູກຈິດສໍານຶກກ່ຽວກັບວຽກງານການກັນ ແລະ ຄວບຄຸມພະຍາດສັດ;
7. ເຜີຍແຜ່ລະບຽບກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດຕາມການມອບໝາຍຂອງພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ ໃນລະບຽບກົດໝາຍ ຂອງ ສປປ ລາວ.

### ມາດຕາ 26. ໜ່ວຍສະເພາະກິດ

ໜ່ວຍສະເພາະກິດຄວບຄຸມພະຍາດລະບາດສັດ ແມ່ນໜ່ວຍງານໜຶ່ງ ທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເປັນໜ່ວຍປະສານງານ ແລະ ສັ່ງການໃນການຈັດຕັ້ງປະຕິ ບັດມາດຕະການຄວບຄຸມພະຍາດລະບາດສັດທີ່ຈໍາເປັນ ທັງເປັນເຈົ້າການໃນການຄົ້ນຫາສາເຫດການລະບາດຂອງພະຍາດ ເພື່ອຮັບປະກັນການຄວບຄຸມພະຍາດລະບາດສັດທີ່ເກີດຂຶ້ນນັ້ນ ໃຫ້ທັນກັບສະພາບການ.

### ມາດຕາ 27. ສິດ ແລະ ໜ້າທີ່ຂອງໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ

ໃນການກັນ ແລະ ຄວບຄຸມພະຍາດສັດ ໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ ໄປຍັງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເທດສະບານ ຢ່າງເປັນປົກກະຕິ;
2. ເຝົ້າລະວັງ ແລະ ລາຍງານກ່ຽວກັບສະພາບການລະບາດ ຂອງພະຍາດສັດ ໄປຍັງຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ;
3. ເຜີຍແຜ່ລະບຽບການ ກ່ຽວກັບການການກັນ ແລະ ຄວບຄຸມພະຍາດສັດ ເພື່ອປູກຈິດສໍານຶກໃຫ້ແກ່ເຈົ້າຂອງ ແລະ ບຸກຄົນທີ່ຮັບຜິດຊອບກ່ຽວກັບສັດ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ ໃນລະບຽບກົດໝາຍ ຂອງ ສປປ ລາວ.

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 36. ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນ ດຳລັດ ສະບັບເລກທີ 206/ນຍ, ລົງວັນທີ 27 ກໍລະກົດ 2007 ວ່າດ້ວຍການຄວາມຄຸມພະຍາດລະບາດສັດ.

ດຳລັດສະບັບນີ້ມີຜົນສັກສິດ ພາຍຫຼັງ ຮ້ອຍແປດສິບວັນ ນັບຈາກວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ

ຮັບແທນນາຍົກລັດຖະມົນຕີ

ອາຊາງ ລາວລີ